Laotian

# ການດູແລເຮືອນ ແລະ ສ້ອມແປງຊັບສິນ

ບໍລິການນີ້ໃຫ້ຄວາມຊ່ວຍເຫລືອດ້ານການ ທຳຄວາມສະອາດ ແລະ ສ້ອມແປງເຮືອນ ແກ່ຜູ່ເຖົ້າທີ່ອ່ອນແອ, ຜູ່ທີ່ມີຄວາມພິການ ແລະ ຜູ່ດູແລພວກເຂົາ.

## ເປົ້າໝາຍ ແລະ ຈຸດປະສົງຂອງບໍລິການ

ເປົ້າໝາຍຂອງການດູແລ ແລະ ສ້ອມແປງເຮືອນນີ້ ແມ່ນເພື່ອປ້ອງກັນເຮືອນໃຫ້ປອດພັຍ ແລະ ມີສະພາບແວດລ້ອມທີ່ອຸດົມສົມບູນເພື່ອພວກຜູ່ເຖົ້າທີ່ອ່ອນແອ ແລະ ພວກທີ່ມີຄວາມພິການຈະໄດ້ຢູ່ຢ່າງເປັນເອກກະຣາດຢູ່ໃນເຮືອນຂອງຕົນເອງໃນຊຸມຊົນ.

**ຈຸດປະສົງຂອງບໍລິການກໍຄື:**

- ໃຫ້ບໍລິການ ການທຳຄວາມສະອາດເຮືອນທີ່ເໝາະສົມຕາມຂັ້ນຂອງການທຳງານຂອງຮ່າງກາຍ ແລະ ວັທນະທັມຂອງພວກເຂົາ
- ໃຫ້ແນ່ໃຈວ່າບໍລິການຕ່າງໆທີ່ໃຫ້ນັ້ນແມ່ນໃນທາງທີ່ເພີ້ມພູນແລະຮັກສາຄວາມສາມາດ ແລະ ຄວາມເປັນເອກກະຣາດຂອງບຸກຄົນນຶ່ງ
- ຮັບໜ້າທີ່ສ້ອມແປງເຮືອນທີ່ຈຳເປັນເພື່ອຮັກສາ ຄວາມໝັ້ນຄົງ ແລະ ຄວາມ ປອດພັຍ ໃນເຮືອນຂອງຜູ່ໃຊ້ບໍລິການ ແລະ
- ອູ້ມຊູຜູ່ໃຫ້ຄວາມດູແລຜູ່ເຖົ້າທີ່ອ່ອນແອ ແລະ ຜູ່ທີ່ມີຄວາມພິການ ດ້ວຍການໃຫ້ຄວາມຊ່ວຍເຫລືອໃນໜ້າທີ່ທີ່ຈຳເປັນເພື່ອຮັກສາສະພາບແວດລ້ອມທີ່ມີຄວາມຢູ່ດີ ແລະ ອຸດົມສົມບູນ

Laotian

## ຄໍາອະທິບາຍ ຂອງ ການດູແລຕົວເອງ

ການບໍຣິການ ການດູແລຕົວເອງ ແມ່ນການດູແລທີ່ ບຸກຄົນນຶ່ງຈະເຮັດໃຫ້ຕົວເອງຕາມປົກກະຕິ, ແຕ່ວ່າ ຍ້ອນຄວາມເຈັບປ່ວຍ, ຄວາມພິການ ຫລື ຄວາມອ່ອນແອ ເຂົາຈຶ່ງບໍ່ສາມາດເຮັດໄດ້ໂດຍປາສຈາກຄວາມຊ່ວຍເຫລືອຈາກຄົນອື່ນ.

ການດູແລຕົວເອງນັ້ນ ຮວມເຖິງ:

- ຄວາມຊ່ວຍເຫລືອ (ຫລື ຄວບຄຸມ)ໃນ ການອາບນໍ້າໃນອ່າງ, ອາບນໍ້າ, ຫລື ຮຸກຖູດ້ວຍຟອງນໍ້າ.
- ຄວາມຊ່ວຍເຫລືອໃນ ການນຸ່ງເສື້ອຜ້າ ຫລື ຖອດເສື້ອຜ້າ.
- ຄວາມຊ່ວຍເຫລືອໃນການ ໂກນໜວດ, ຮັກສາ ແລະ ຕົກແຕ່ງຜົມ.
- ການຮັກສາເລັບແບບຈໍາກັດ, ພຽງແຕ່ເຮັດຕາມການປະເມີນຂອງຜູ່ຊໍານານເທົ່ານັ້ນ
- ຄວາມຊ່ວຍເຫລືອໃນການເຄື່ອນຍ້າຍ (ເຂົ້າຕຽງແລະອອກຈາກຕຽງ) ເຊັ່ນ ເພື່ອລຸກຂຶ້ນນັ່ງ,ປີ່ນ,ລຸກຂຶ້ນແລະຍ່າງ, ນັ່ງ, ລຸກໄປຫ້ອງນໍ້າ, ຕັ່ງລໍ້ຍູ້, ຕັ່ງຫລືຣົຖ.
- ຄວາມຊ່ວຍເຫລືອໃນການກິນ ແລະ ດື່ມ, ຮວມເຖິງ ການກຽມແລະປຸງອາຫານ ແລະ ການກິນອາຫານແບບພິເສດ.
- ຄວາມຊ່ວຍເຫລືອໃນເລື້ອງການໄປຖ່າຍ.
- ຄວາມຊ່ວຍເຫລືອໃນເລື້ອງອອກກໍາລັງກາຍ ຫລື ໂຄງການຮັກສາຮ່າງກາຍ
- ການແປງແລະການໃຊ້ ເຄື່ອງໃຊ້ຕ່າງໆເຊັ່ນ ເຝືອກ, ເຫລັກດາມກະດູກ ແລະ ຫລັກຕາກເສື້ອຜ້າ.
- ຄວາມຊ່ວຍເຫລືອໃນເລື້ອງເຄື່ອງຊ່ວຍໃນການຟັງ ແລະ ການສົນທະນາ.
- ການຄວາມຄຸມການກິນຢາດ້ວຍຕົນເອງ.
- ຄວາມຊ່ວຍເຫລືອໃນການປະຕິບັດໜ້າທີ່ຂອງການໃຊ້ຊີວິດປະຈໍາວັນ.